ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ເລກທີ 2642 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

# ໜັງສືແຈ້ງເຊີນປະມູນ

1. ຫ້ອງການ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ທີ່ດໍາເນີນກິດຈະການດ້ານອຸປະກອນລະບົບກອງປະຊຸມທາງໄກ ເຂົ້າຮ່ວມປະມູນໂຄງການຂະຫຍາຍລາຍເຊັນຜູ້ຊົມໃຊ້ລະບົບກອງປະຊຸມທາງໄກ True Conf ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈໍາປີ 2023. ເຊິ່ງກໍານົດມອບ-ຮັບສິນຄ້າ ພາຍໃນ 21 ວັນ, ພາຍຫຼັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນແບບເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນລະບົບກອງປະຊຸມທາງໄກ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ສູນບໍລິຫານລັດດິຈິຕອນ (ພະແນກລະບົບເຄືອຂ່າຍ ແລະ ເຊື່ອມໂຍງ) ຊັ້ນ 02 ທີ່ຕຶກກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດໃນຮົ້ວຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ) ຕັ້ງຢູ່ບ້ານ: ສີສະຫວາດ, ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 020 57171263, 020 55555863. ຈະເລີ່ມຂາຍຊອງແຕ່ວັນທີ 16 ຕຸລາ 2023 ເຖິງວັນທີ 06 ພະຈິກ 2023 (ໃນວັນລັດຖະການ), ໃນລາຄາ 2,000,000 ກີບ/ຊອງ (ສອງລ້ານກີບຖ້ວນ), ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 13:30 ໂມງ ຂອງວັນທີ 07 ພະຈິກ 2023 ທີ່ຫ້ອງປະຊຸມຊັ້ນ02, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 13:30 ໂມງ ຂອງວັນທີ 07 ພະຈິກ 2023 ໂດຍຊ້ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄໍ້າປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄໍ້າປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 02% (ສ່ວນຮ້ອຍ) ຂອງມູນຄ່າສະເໜີ.

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ອະລະໄຊ ດາລາລອຍ